ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0341 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 14.2.2024

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ທີ່ ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາ ຂອງປະເທດນິວຊີແລນ **Manaaki New Zealand Scholarships (MNZS)** ສຳລັບສົກປີ **2024**.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນການສຶກສາ ຈາກຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 517/ຫກ, ລົງວັນທີ 07 ກຸມພາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນການສຶກຂອງປະເທດນິວຊີແລນ Manaaki New Zealand Scholarships (MNZS) ສຳລັບສົກປີ 2024 ພາຍໃຕ້ທຶນລັດຖະບານນິວຊີແລນ, ຈຳນວນ 35 ທຶນ ຊຶ່ງມີ ລະດັບອະນຸປະລິນຍາ 6 ເດືອນ, ອະນຸປະລິນຍາ 1 ປີ, ປະລິນຍາໂທ 1-2 ປີ ແລະ ປະລິນຍາເອກ 3,5 ປີ ສຳລັບສົກປີ 2024.

ສຳລັບຮູບແບບການສະໝັກ ແມ່ນລະບົບອອນລາຍໂດຍຜ່ານທາງເວັບໄຊ www.nzscholarships. govt.nz ກ່ອນວັນທີ **28 ກຸມພາ 2024** ພາຍຫຼັງສະໝັກຜ່ານທາງເວັບໄຊແລ້ວໃຫ້ສະແກນສົ່ງໃຫ້ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວຍລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ປ່າໄມ້ ກົມຈັດຕັ້ງແລະພະນັກງານ

ບຸນທະວີ ໄຊຍະເພັດ

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com